**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

**DAKLAORUCO** ເລກທີ : 10/ ລບ- ບສ

*ປາກເຊ, ວັນທີ 23 ເດືອນ 7 ປີ 2024*

**ກົດລະບຽບ**

**ວ່າດ້ວຍການຄຸ້ມຄອງເຄື່ອງໝາຍການຄ້າ FSC**

- ອີງໃສ່ມາດຕະຖານຕ່ອງໂສ້ຜະລິດຕະພັນ FSC-STD - 40-004 V3.1;

- ອີງຕາມມາດຕະຖານ FSC-STD-50-001 V2-1;

- ພິຈາລະນາການສະເໜີຂອງຄະນະ FSC ຂອງບໍລິສັດ.

ດັ່ງນັ້ນ, ບໍລິສັດໄດ້ປະກາດໃຊ້ກົດລະບຽບວ່າດ້ວຍການຄຸ້ມຄອງແລະການນຳໃຊ້ເຄື່ອງໝາຍການຄ້າ FSC ດັ່ງຕໍ່ໄປນີ້:

1. ບໍລິສັດປະຕິບັດແລະຮັກສາລະບົບການຄຸ້ມຄອງເຄື່ອງໝາຍການຄ້າຕາມມາດຕະຖານ FSC-STD-50-001 V2-1, ລາຍລະອຽດດັ່ງນີ້:

- ເຄື່ອງຫມາຍການຄ້າທີ່ໃຊ້ໃນການໂຄສະນາ, ສົ່ງເສີມຜະລິດຕະພັນ, ເອກະສານທີ່ສຶກສາກ່ຽວກັບຜະລິດຕະພັນຈະຮັບປະກັນບໍ່ໃຫ້ສັບສົນ ຫຼື ເຮັດໃຫ້ລູກຄ້າແລະຜູ້ນຳໃຊ້ເຂົ້າໃຈຜິດ; ຮັບປະກັນວ່າຜະລິດຕະພັນທີ່ຜ່ານການຢັ້ງຢືນ ແລະ ບໍ່ໄດ້ຮັບການຢັ້ງຢືນຈະຖືກຈຳແນກຢ່າງຈະແຈ້ງ;

- ບໍລິສັດພຽງແຕ່ນຳໃຊ້ເຄື່ອງຫມາຍການຄ້າ FSC ເມື່ອມີສັນຍາການອະນຸຍາດເຄື່ອງຫມາຍການຄ້າ FSC ຈາກອົງການຢັ້ງຢືນ ແລະ ພຽງແຕ່ໃຊ້ໂລໂກ້ FSC ໃນເອກະສານໂຄສະນາ, ບົນຜະລິດຕະພັນເມື່ອມີການປະກາດ "ມີພຽງແຕ່ຜະລິດຕະພັນທີ່ລະບຸໄວ້ເອກະສານສະບັບນີ້ໄດ້ຮັບການຢັ້ງຢືນ FSC®. "ເມື່ອໄດ້ເປີດເຜີຍຢ່າງເຫມາະສົມສອດຄ່ອງ ແລະ ໄດ້ຮັບການອະນຸມັດໂດຍຄະນະນຳຂອງບໍລິສັດ.

2. ຫົວຫນ້າຄະນະ FSCເປັນຜູ້ຮັບຜິດຊອບໃນການຄຸ້ມຄອງແລະຕິດຕາມການນຳໃຊ້ເຄື່ອງຫມາຍການຄ້າຕາມມາດຕະຖານ FSC-STD-50-001 V2-1.

3. ຈັດຕັ້ງປະຕິບັດ ແລະ ອັບເດດໃໝ່ບັນດາລະບຽບການ ທີ່ກ່ຽວຂ້ອງກັບການຄວບຄຸມເຄື່ອງໝາຍການຄ້າພາຍໃນບໍລິສັດ. ໂດຍສະເພາະ, ເມື່ອມີເອກະສານສະບັບປັບປຸງທີ່ກ່ຽວຂ້ອງກັບການຄວບຄຸມເຄື່ອງຫມາຍການຄ້າຈະໄດ້ປະຕິບັດຕາມຫຼັກການຄວບຄຸມເອກະສານ (QT01).

4. ບຸກຄະລາກອນທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດແຕ່ລະລະບຽບການ:ດ້ວຍຄຸນລັກສະນະຂອງຮູບແບບການຜະລິດລະບົບຕ່ອງໂສ້, ບັນດານິຄົມ ແລະ ໂຮງງານແມ່ນມີຄວາມຫ່າງໄກທາງພູມສັນຖານ. ດັ່ງນັ້ນ, ການຄວບຄຸມເຄື່ອງໝາຍການຄ້າຈະຖືກມອບຫມາຍໃຫ້ແຕ່ລະຫນ່ວຍງານແລະບຸກຄົນທີ່ຮັບຜິດຊອບຢ່າງຊັດເຈນ. ພ້ອມກັນນັ້ນ, ພະນັກງານທີ່ໄດ້ຮັບມອບໝາຍຈະໄດ້ຮັບການຝຶກອົບຮົມເພື່ອຮັບປະກັນຄວາມສາມາດໃນການປະຕິບັດລະບົບຄຸ້ມຄອງການນຳໃຊ້ເຄື່ອງໝາຍ.

5. ຂອບເຂດຂອງລະບົບໄດ້ກຳນົດໃຫ້ມີການຕິດສະຫຼາກ ແລະ ໂຄສະນາເທິງຜະລິດຕະພັນ, ເອກະສານ, ຈັດພິມ, ໃບປິວ...

6. ບັນດາຂັ້ນຕອນ ແລະ ເອກະສານທີ່ກ່ຽວຂ້ອງກັບການອັບເດດ ແລະ ອະນຸມັດເຄື່ອງໝາຍການຄ້າ ຈະຖືກເກັບຮັກສາໄວ້ຢ່າງໜ້ອຍ 5 ປີ.

7. ກ່ອນທີ່ຈະນຳໃຊ້ເຄື່ອງໝາຍການຄ້າ FSC ໃໝ່ແຕ່ລະຄັ້ງ, ບໍລິສັດຮັບປະກັນວ່າການນຳໃຊ້ເຄື່ອງໝາຍການຄ້າຖືກຄວບຄຸມໂດຍຂັ້ນຕອນການອະນຸມັດເຄື່ອງໝາຍການຄ້າພາຍໃນ ຫຼື ໂດຍການໄດ້ຮັບການອະນຸມັດຈາກອົງການຢັ້ງຢືນຂອງຕົນ.

8. ລະບົບການຄວບຄຸມພາຍໃນຂອງບໍລິສັດປະກອບມີຜູ້ຄວບຄຸມທີ່ຖືກແຕ່ງຕັ້ງທີ່ເຮັດຫນ້າທີ່ເປັນຜູ້ອະນຸມັດພາຍໃນຂອງການນຳໃຊ້ເຄື່ອງຫມາຍການຄ້າ. ໃນເວລາດຽວກັນກໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການນຳໃຊ້ເຄື່ອງໝາຍການຄ້າ FSC - ຈະເຂົ້າຮ່ວມການຝຶກອົບຮົມເຄື່ອງໝາຍການຄ້າ FSC ອອນໄລນ໌ສຳລັບຜູ້ຖືໄດ້ຮັບໃບຢັ້ງຢືນ.

9. ຮູບແບບຂອງໂລໂກ້ ແລະ ເຄື່ອງໝາຍການຄ້າ FSC: ຫຼັງຈາກໄດ້ຮັບການຢັ້ງຢືນ, ບໍລິສັດຈະໄດ້ຮັບການແນະນຳ, ອະນຸຍາດເຂົ້າປະຕູເຄື່ອງໝາຍການຄ້າອອນໄລນ໌ເພື່ອເລືອກການໂຄສະນາ ແລະ ສະຫຼາກຜະລິດຕະພັນທີ່ໄດ້ຮັບການຢັ້ງຢືນໂດຍອົງການອອກໃບຢັ້ງຢືນ.

ຂ້າງເທິງນີ້ແມ່ນກົດລະບຽບຂອງບໍລິສັດວ່າດ້ວຍການຄຸ້ມຄອງເຄື່ອງໝາຍການຄ້າ FSC. ຮຽກຮ້ອງໃຫ້ບັນດາຫ້ອງການ, ບັນດານິຄົມຈົ່ງນຳໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ./.

**ອຳນວຍການບໍລິສັດ**

**ບ່ອນນຳສົ່ງ:**

- ຄະນະອຳນວຍການ ບສ;
- ຫ້ອງການ ບສ;
- ບັນດາໜ່ວຍງານ;
- ສຳເນົາຂາອອກ-ຂາເຂົ້າ, ຄະນະ FSC.

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາ

*Nguyễn Đức Hạnh*